

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I.** ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ..................................01 - 04

**II.** ການເຄື່ອນໄຫວຂອງ ການນຳຂັ້ນສູງ.................................................................05 - 07

**III.** ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ................................................08 - 10

**VI.** ການເຄື່ອນໄຫວຂອງ ອົງການຈັດຕັ້ງມະຫາຊົນ ພາຍໃນ ຄຕພ................................................11 - 12


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ເດືອນເມສາ 2026


ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

**Tel: 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la**

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

#### 1) ພັກກອມມູນິດຫວຽດນາມ

ກອງປະຊຸມກົມການເມືອງສູນກາງພັກ ກອມມູນິດຫວຽດນາມ ໂດຍການເປັນປະທານຂອງ ສະຫາຍ ເຈີນ ເກິ້ມ ຕູ໋, ກຳມະການກົມການເມືອງ, ຜູ້ປະຈຳການ ຄະນະເລຂາທິການສູນກາງພັກ ໄດ້ຈັດຂຶ້ນໃນວັນທີ 01 ເມສາ 2026 ເພື່ອປະກາດຂໍ້ຕົກລົງຂອງກົມການເມືອງສູນກາງພັກ ວ່າດ້ວຍການໂອນ 5 ອົງການຈັດຕັ້ງຂອງລັດຖະບານ: ໂທລະພາບຫວຽດນາມ, ວິທະຍຸກະຈາຍສຽງຫວຽດນາມ, ສຳນັກຂ່າວສານຫວຽດນາມ, ສະຖາບັນບັນດິດວິທະຍາສາດສັງຄົມຫວຽດນາມ, ສະຖາບັນບັນດິດວິທະຍາສາດ ແລະ ເຕັກໂນໂລຊີ ຫວຽດນາມ ໄປຂຶ້ນກັບສູນກາງພັກ ໂດຍແມ່ນ ສະຫາຍ ເລ ວັນ ເລິ້ຍ, ກຳມະການສູນກາງພັກ ເປັນປະທານສະຖາບັນບັນດິດວິທະຍາສາດສັງຄົມຫວຽດນາມ, ຮອງຫົວໜ້າຄະນະ ນະໂຍບາຍ ແລະ ຍຸດທະສາດ ສູນກາງພັກ; ສະຫາຍ ເຈີນ ຮົງ ຖາຍ, ກຳມະການສູນກາງພັກ ເປັນປະທານສະຖາບັນ ບັນດິດວິທະຍາສາດ ແລະ ເຕັກໂນໂລຊີຫວຽດນາມ, ທັງເປັນຮອງຫົວໜ້າຄະນະ ນະໂຍບາຍ ແລະ ຍຸດທະສາດ ສູນກາງພັກ; ສະຫາຍ ຫງວຽນ ແທງ ເລິມ, ກຳມະການສູນກາງພັກ ເປັນຜູ້ອຳນວຍການໃຫຍ່ ໂທລະພາບຫວຽດນາມ, ທັງເປັນຮອງຫົວໜ້າ ຄະນະໂຄສະນາສຶກສາ ແລະ ຂົນຂວາຍປະຊາຊົນ ສູນກາງພັກ; ສະຫາຍ ໂດ໋ ຕຽນ ສີ, ກຳມະການສູນກາງພັກ ເປັນ ຜູ້ອຳນວຍການໃຫຍ່ ວິທະຍຸກະຈາຍສຽງຫວຽດນາມ, ທັງເປັນ ຮອງຫົວໜ້າຄະນະໂຄສະນາສຶກສາ ແລະ ຂົນຂວາຍປະຊາຊົນ ສູນກາງພັກ; ສະຫາຍ ຫວູ ຫວຽດ ຈາງ ເປັນ ຜູ້ອຳນວຍການໃຫຍ່ ສຳນັກຂ່າວສານຫວຽດນາມ, ທັງເປັນ ຮອງຫົວໜ້າຄະນະໂຄສະນາສຶກສາ ແລະ ຂົນຂວາຍປະຊາຊົນ ສູນກາງພັກ. ສະຫາຍ ເຈີນ ເກິ້ມ ຕູ໋ ໄດ້ກ່າວເນັ້ນວ່າ ການໂອນ 5 ອົງການທີ່ຂຶ້ນກັບລັດຖະບານ ມາເປັນຫົວໜ່ວຍວິຊາສະເພາະຂອງ ຄະນະບໍລິຫານງານສູນກາງພັກ ເປັນການຕັດສິນໃຈທີ່ສຳຄັນ, ສະແດງໃຫ້ເຫັນເຖິງວິໄສທັດ ຍຸດທະສາດ ຂອງພັກໃນວຽກງານ ສືບຕໍ່ປ່ຽນແປງໃໝ່ແບບແຜນວິທີການນຳພາ, ຍົກສູງປະສິດທິພາບ, ປະສິດທິຜົນ ການເຄື່ອນໄຫວຂອງບັນດາອົງການ ໜັງສືພິມ, ວິທະຍຸ, ໂທລະພາບ ເປັນກະບອກສຽງຫຼັກແຫຼ່ງຂອງຊາດ, ອົງການຄົ້ນຄວ້າວິທະຍາສາດທີ່ສຳຄັນຂອງຊາດ; ພ້ອມທັງເພີ່ມທະວີການນຳພາໂດຍກົງ, ຮອບດ້ານຂອງສູນກາງພັກ ໃນບັນດາຂົງເຂດທີ່ມີບົດບາດສຳຄັນພິເສດ ຕໍ່ການພັດທະນາຂອງຊາດ.

ວັນທີ 06 ເມສາ 2026, ສະພາແຫ່ງຊາດ ໄດ້ເປີດກອງປະຊຸມຄັ້ງປະຖົມມະລືກ ຊຸດທີ XVI ໄລຍະ 2026-2031 ຢູ່ນະຄອນຫຼວງຮ່າໂນ້ຍ, ສະມາຊິກສະພາໄດ້ເປັນເອກະພາບເລືອກເອົາ ສະຫາຍ ເຈິ່ນ ແທງ ໝັນ, ກຳມະການກົມການເມືອງ, ປະທານສະພາແຫ່ງຊາດ ໃຫ້ສືບຕໍ່ດຳລົງຕຳແໜ່ງ ເປັນປະທານສະພາແຫ່ງຊາດ ອີກໜຶ່ງສະໄໝ, ສະຫາຍ ໂຕ ເລິມ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ສືບຕໍ່ດຳລົງແໜ່ງເປັນ ເລຂາທິການໃຫຍ່ ອີກໜຶ່ງສະໄໝ ພ້ອມທັງເປັນປະທານປະເທດ ແລະ ເລືອກເອົາ ສະຫາຍ ເລ ມິງ ຮົງ, ເປັນນາຍົກລັດຖະມົນຕີ. ຫຼັງຈາກນັ້ນ, ສະຫາຍ ໂຕ ເລິມ ໄດ້ຂຶ້ນກ່າວສາບານຕົນວ່າ: ພາຍໃຕ້ທຸງແດງດາວຄຳອັນສັກສິດຂອງປະເທດຊາດ, ຕໍ່ໜ້າສະພາແຫ່ງຊາດ, ພໍ່ແມ່ປະຊາຊົນ ແລະ ຜູ້ມີສິດເລືອກຕັ້ງ, ຂ້າພະເຈົ້າຂໍສາບານຕົນ ຈະຈົງຮັກພັກດີຕໍ່ປະເທດຊາດ, ຕໍ່ປະຊາຊົນ, ຕໍ່ລັດຖະທຳມະນູນ ແລະ ມານະພະຍາຍາມປະຕິບັດສຳເລັດທຸກໜ້າທີ່ໆ ພັກ, ລັດ ແລະ ປະຊາຊົນມອບໝາຍໃຫ້. ນອກນັ້ນກອງປະຊຸມຍັງໄດ້ພິຈາລະນາ ແລະ ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ສຳລັບປີ 2026-2030; ແຜນການເງິນ 5 ປີ ແຫ່ງຊາດ ສຳລັບປີ 2026-2030; ແຜນກູ້ຢືມ ແລະ ຊຳລະໜີ້ສາທາລະນະ ສຳລັບປີ 2026-2030 ແລະ ແຜນການລົງທຶນສາທາລະນະໄລຍະກາງ ສຳລັບປີ 2026-2030.

#### 2) ພັກກອມມູນິດຈີນ

ວັນທີ 07 ເມສາ 2026, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ຄະນະກຳມະການສູນກາງພັກຄອມມູນິດຈີນ, ປະທານປະເທດ ແຫ່ງ ສປ ຈີນ ໄດ້ສົ່ງສານຊົມເຊີຍເຖິງ ສະຫາຍ ໂຕ ເລິມ ເນື່ອງໃນໂອກາດ ທີ່ສະຫາຍ ໄດ້ຮັບເລືອກຕັ້ງເປັນ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ປະທານປະເທດ ແຫ່ງ ສສ ຫວຽດນາມ ໂດຍມີເນື້ອໃນ ລະບຸວ່າ: ໃນຊຸມປີມໍ່ໆມານີ້, ການພົວພັນລະຫວ່າງ ຈີນ-ຫວຽດນາມ ໄດ້ບັນລຸການພັດທະນາແບບກ້າວກະໂດດ, ການຮ່ວມມືຍຸດທະສາດຮອບດ້ານໄດ້ຮັບໝາກຜົນຢ່າງອຸດົມສົມບູນ. ຈີນ ແລະ ຫວຽດນາມ ເພີ່ມທະວີຄວາມສາມັກຄີ ແລະ ການປະສານງານກັນ ແມ່ນສອດຄ່ອງກັບຜົນປະໂຫຍດຮ່ວມຂອງສອງພັກສອງລັດ. ຂ້າພະເຈົ້າໃຫ້ຄວາມສຳຄັນເປັນຢ່າງສູງ ຕໍ່ການພັດທະນາການພົວພັນຂອງສອງພັກສອງລັດ ຈີນ-ຫວຽດນາມ, ຍິນດີຮ່ວມກັບ ສະຫາຍ ໂຕ ເລິມ, ສຸມຄວາມພະຍາຍາມນຳພາການສ້າງຄູ່ຮ່ວມຊະຕາກຳ ຈີນ-ຫວຽດນາມ ໃຫ້ກ້າວໄປຂ້າງໜ້າຢ່າງຕໍ່ເນື່ອງ, ພັດທະນາ

ພາລະກິດສັງຄົມນິຍົມຂອງຕົນໃຫ້ເຂັ້ມແຂງຂຶ້ນຢ່າງບໍ່ຢຸດຢັ້ງ, ເພີ່ມຄວາມໝັ້ນທ່ຽງ ແລະ ພະລັງທາງບວກໃຫ້ແກ່ພາກພື້ນ ກໍຄືທົ່ວໂລກ. ພ້ອມດຽວກັນນັ້ນ, ສະຫາຍ ຫຼີສຽງ, ນາຍົກລັດຖະມົນຕີຈີນ ໄດ້ສົ່ງສານຊົມເຊີຍເຖິງ ສະຫາຍ ເລ ມິງ ຮຶງ ທີ່ໄດ້ຮັບເລືອກຕັ້ງເປັນນາຍົກລັດຖະມົນຕີຫວຽດນາມເຊັ່ນດຽວກັນ.

**3) ພັກກອມມູນິດກູບາ**

ວັນທີ 04 ເມສາ 2026, ສ.ກູບາ ໄດ້ອະໄພຍະໂທດໃຫ້ນັກໂທດຈຳນວນ 2,010 ຄົນ ເພື່ອເປັນການສະແດງຄວາມເມດຕາຕໍ່ເພື່ອນມະນຸດ, ຊຶ່ງການອະໄພຍະໂທດຄັ້ງນີ້ ຖືເປັນການປ່ອຍຕົວນັກໂທດ ຄັ້ງທີ 2 ໃນປີນີ້ ລະຫວ່າງການເຈລະຈາກັບ ສ.ອາເມຣິກາ ແລະ ຍັງເປັນໜຶ່ງໃນການປ່ອຍຕົວນັກໂທດຄັ້ງໃຫຍ່ທີ່ສຸດໃນຮອບເກືອບສິບປີ. ພ້ອມດຽວກັນນັ້ນ, ສຳນັກງານປະທານປະເທດກູບາ ໄດ້ຖະແຫຼງວ່າ ການຕັດສິນໃຈດັ່ງກ່າວ ເກີດຂຶ້ນພາຍໃຕ້ກິດຈະກຳຂອງການປະກອບພິທີທາງສາສະໜາ, ຊຶ່ງເປັນທຳນຽມປະຕິບັດໃນລະບົບຍຸຕິທຳຂອງກູບາ ເຊິ່ງສະແດງເຖິງມໍລະດົກທາງດ້ານມະນຸດສະທຳຂອງການປະຕິວັດ. ຢ່າງໃດກໍຕາມ, ລັດຖະບານ ສ. ອາເມຣິກາ ໄດ້ສະແດງທ່າທີ ວ່າ ຈະກວດສອບການປ່ອຍຕົວນັກໂທດຢ່າງໃກ້ຊິດ ເພື່ອຫາຫຼັກຖານວ່າ ມີນັກໂທດການເມືອງຢູ່ໃນກຸ່ມຜູ້ທີ່ໄດ້ຮັບການປ່ອຍຕົວ ຫຼື ບໍ່. ພ້ອມນັ້ນ, ໂຄສົກຂອງ ທ່ານ ທຣຳ ໄດ້ກ່າວວ່າ ຍັງບໍ່ມີຄວາມຊັດເຈນເທື່ອວ່າ ຈະມີການປ່ອຍຕົວນັກໂທດການເມືອງຈຳນວນເທົ່າໃດ ຫຼື ຈະມີການປ່ອຍຕົວນັກໂທດການເມືອງ ຫຼື ບໍ່; ສ່ວນລັດຖະບານກູບາ ກໍປະຕິເສດມາຕະຫຼອດວ່າ ບໍ່ໄດ້ຕັດສິນໃຈຫຍັງພາຍໃຕ້ແຮງກົດດັນຈາກ ສ. ອາເມຣິກາ ແລະ ປະຕິເສດວ່າ ບໍ່ໄດ້ຄຸມຂັງນັກໂທດທາງການເມືອງ.

## 2. ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ການເມືອງໄທ:** ຫຼັງຈາກທີ່ສະພາຜູ້ແທນຣາດຊະດອນຂອງໄທ ໄດ້ລົງຄະແນນສຽງຮັບຮອງເອົາ ທ່ານ ອານຸທິນ ຊານວີຣະກຸນ, ເປັນນາຍົກລັດຖະມົນຕີໄທ, ທ່ານ ອານຸທິນ ກໍໄດ້ປະກາດຄະນະລັດຖະບານຊຸດໃໝ່, ພ້ອມທັງໄດ້ຖະແຫຼງນະໂຍບາຍຂອງລັດຖະບານຊຸດປະຈຸບັນ ໂດຍໄດ້ເນັ້ນໜັກໃນການປະຕິຮູບເສດຖະກິດ, ສະຫວັດດີການສັງຄົມ, ຄວາມໝັ້ນຄົງ ແລະ ການພັດທະນາແບບຍືນຍົງ ເພື່ອສ້າງປະເທດໃຫ້ເຂັ້ມແຂງ, ສາມາດແຂ່ງຂັນ, ເພິ່ງພາຕົນເອງ ແລະ ຍົກລະດັບຄຸນນະພາບຊີວິດປະຊາຊົນ, ການປາບປາມອາຊະຍາກຳຂ້າມຊາດ ເຊັ່ນ ຢາເສບຕິດ, ການຫຼອກລວງອອນລາຍ ແລະ ອື່ນໆ. ສ່ວນນະໂຍບາຍການຕ່າງປະເທດ ແມ່ນຈະເນັ້ນການສ້າງການພົວພັນທີ່ດີກັບປະເທດມະຫາອຳນາດ ແລະ ພັນທະມິດທຸກຝ່າຍ, ດຳເນີນນະໂຍບາຍການທູດແບບເປັນກາງ; ສົ່ງເສີມບົດບາດໃນພາກພື້ນ ເປັນຕົ້ນແມ່ນ ໃນອາຊຽນ; ສົ່ງເສີມສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືໃນພາກພື້ນ ແລະ ສາກົນ.

**ການເມືອງມຽນມາ:** ວັນທີ 03 ເມສາ 2026, ສະພາມຽນມາ ໄດ້ລົງມະຕິເລືອກເອົາ ທ່ານ ມິນ ອ່ອງ ຫລ່າຍ, ເປັນປະທານາທິບໍດີຄົນໃໝ່ຂອງປະເທດ ດ້ວຍຄະແນນສຽງ 429 ສຽງ ຈາກທັງໝົດ 584 ສຽງ ໃນກອງປະຊຸມຮ່ວມຂອງສະພາສູງ ແລະ ສະພາຕ່ຳ. ຂະນະທີ່, ຜູ້ສະໝັກອີກ 02 ທ່ານ: ທ່ານ ອູ ຢໍ ຊໍ (ໄດ້ຮັບ 126 ສຽງ) ແລະ ທ່ານ ນາງ ນານ ນີນີໄອ (ໄດ້ຮັບ 29 ສຽງ) ຈະດຳລົງຕຳແໜ່ງເປັນຮອງປະທານາທິບໍດີ. ການຂຶ້ນຮັບຕຳແໜ່ງໃນຄັ້ງນີ້ ຖືເປັນການປ່ຽນຈາກການປົກຄອງໂດຍກົງຂອງກອງທັບ ມາເປັນລັດຖະບານພົນລະເຮືອນ. ກ່ອນຈະມີການເລືອກຕັ້ງ, ທ່ານ ມິນ ອອງ ຫລ່າຍ ໄດ້ລາອອກຈາກຕຳແໜ່ງ ຜູ້ບັນຊາການທະຫານສູງສຸດ ໃນວັນທີ 30 ມີນາ 2026 ເພື່ອເຂົ້າມາສະໝັກຮັບເລືອກຕັ້ງໃນນາມພົນລະເຮືອນ ໂດຍໄດ້ແຕ່ງຕັ້ງຄົນສະໜິດຄື ທ່ານ ເຍ ວິນ ໃຫ້ຂຶ້ນເປັນຜູ້ບັນຊາການກອງທັບແທນ. ລັດຖະບານເອກະພາບແຫ່ງຊາດ (NUG), ຊຶ່ງເປັນກຸ່ມຝ່າຍຄ້ານຫຼັກ ໄດ້ອອກມາປະນາມການເລືອກຕັ້ງຄັ້ງນີ້ວ່າ ເປັນພຽງການຈັດສາກ ເພື່ອສືບຕໍ່ອຳນາດຜະເດັດການ. ການເລືອກຕັ້ງຄັ້ງນີ້ ເກີດຂຶ້ນທ່າມກາງສົງຄາມກາງເມືອງ ທີ່ຍັງມີຄວາມຮຸນແຮງໃນຫຼາຍພື້ນທີ່ຂອງມຽນມາ ແລະ ວິກິດການທາງເສດຖະກິດ ທີ່ເຮັດໃຫ້ປະຊາຊົນຈຳນວນຫຼາຍ ຍັງຕໍ່ຕ້ານການປົກຄອງຂອງກອງທັບຢ່າງຕໍ່ເນື່ອງ.

**ການພົວພັນ ລະຫວ່າງ ສ. ເກົາຫຼີ ແລະ ຝຣັ່ງ**: ໃນລະຫວ່າງວັນທີ 02-03 ເມສາ 2026, ທ່ານ Emmanuel Macron, ປະທານາທິບໍດີຝຣັ່ງ ໄດ້ຢ້ຽມຢາມ ສ.ເກົາຫຼີ ຢ່າງເປັນທາງການ ໂດຍການຕ້ອນຮັບຂອງ ທ່ານ Lee Jea Myung, ປະທານາທິບໍດີ ສ.ເກົາຫຼີ, ຊຶ່ງນີ້ເປັນການຢ້ຽມຢາມ ສ. ເກົາຫຼີ ຄັ້ງທຳອິດໃນລະດັບ ປະທານາທິບໍດີຝຣັ່ງ ໃນຮອບກວ່າ 10 ປີ ນັບແຕ່ປີ 2015 ເປັນຕົ້ນມາ. ສອງຝ່າຍ ໄດ້ຮ່ວມກັນປຶກສາຫາລືໃນຫຼາຍບັນຫາສຳຄັນ ກ່ຽວກັບການຮ່ວມມືສອງຝ່າຍ ລວມທັງສະພາບການພາກພື້ນ ແລະ ສາກົນ ໂດຍສະເພາະ ບັນຫາຕາເວັນອອກກາງ ທີ່ສົ່ງຜົນກະທົບທາງດ້ານວິກິດການພະລັງງານ ແລະ ຄວາມໝັ້ນຄົງຂອງໂລກ; ໄດ້ຕົກລົງເຫັນດີ ກ່ຽວກັບແຜນການທີ່ຈະຍົກລະດັບການຮ່ວມມືທາງດ້ານວຽກງານປ້ອງກັນປະເທດຮ່ວມກັນ ໃຫ້ມີຄວາມ ແໜ້ນແຟ້ນຍິ່ງຂຶ້ນໃນອະນາຄົດ, ປະສານສົມທົບ

ກັນຢ່າງໃກ້ຊິດ ເພື່ອຮັບມື ແລະ ແກ້ໄຂບັນຫາເສດຖະກິດ, ວິກິດດ້ານພະລັງງານທີ່ມີສາເຫດມາຈາກສົງຄາມຢູ່ຕາເວັນອອກກາງ ລວມທັງຮ່ວມກັນຊອກຫາວິທີການທີ່ສອດຄ່ອງ ແລະ ເໝາະສົມ ໃນການເປີດຊ່ອງແຄບຮໍມຸດສ ເພື່ອຮັກສາສະຖຽນລະພາບທາງດ້ານພະລັງງານໂລກ ແລະ ອື່ນໆ. ໃນໂອກາດນີ້, ສອງຝ່າຍ ໄດ້ບັນລຸຂໍ້ຕົກລົງ ວ່າດ້ວຍ ການຮ່ວມມືໃນດ້ານຕ່າງໆ ເຊັ່ນ: ແຮ່ທາດສຳຄັນ ແລະ ແຮ່ຫາຍາກ, ເຕັກໂນໂລຊີຂັ້ນສູງ, ປັນຍາປະດິດ, ເຊມິຄອນດັກເຕີ, ນະວັດຕະກຳຄວາມຕຳ (Quantum), ພະລັງງານນິວເຄລຍ ແລະ ພະລັງງານລົມ. ເຫດການພົ້ນເດັ່ນອີກດ້ານໜຶ່ງທີ່ຫຼາຍຝ່າຍໃຫ້ຄວາມສົນໃຈ ຄື: ໃນລະຫວ່າງການຢ້ຽມຢາມຄັ້ງນີ້, ທ່ານ Macron ໄດ້ຮຽກຮ້ອງໃຫ້ບັນດາປະເທດພັນທະມິດ ບໍ່ໃຫ້ຜູກຂາດກັບ ສ. ອາເມຣິກາ ແລະ ສປ ຈີນ ພ້ອມທັງສະເໜີໃຫ້ບັນດາພັນທະມິດເຫຼົ່ານັ້ນ ລວມຕົວກັນ ເພື່ອສ້າງຂົ້ວອຳນາດໃໝ່ທີ່ສ້າງ ສັນ ທ່າມກາງການປະເຊີນໜ້າ ແລະ ວິກິດສົງຄາມ ຢູ່ຫຼາຍພາກພື້ນທີ່ຍັງສືບຕໍ່ດຳເນີນຢູ່ ແລະ ອື່ນໆ.

## 3. ພາກພື້ນເອີຣົບ-ອາເມຣິກາ

**ບັນຫາຄວາມຂັດແຍ່ງ ລະຫວ່າງ ອູແກຣນ ແລະ ຣັດເຊຍ:** ສອງຝ່າຍຍັງສືບຕໍ່ໂຈມຕີໃສ່ຈຸດຍຸດທະສາດທີ່ສຳຄັນຂອງກັນ ແລະ ກັນ ເປັນຕົ້ນແມ່ນ ພື້ນຖານໂຄງລ່າງທາງດ້ານພະລັງງານ ແລະ ຈຸດຍຸດທະສາດທາງການທະຫານ ໂດຍສະເພາະ ແມ່ນ ອູແກຣນ ໄດ້ນຳໃຊ້ ໂດຣນ ໂຈມຕີຄັງນ້ຳມັນໃຫຍ່ຂອງ ຣັດເຊຍ ຢູ່ທ່າເຮືອ Primorsk ໃນທະເລດທະເລບານຕິກ, ຊຶ່ງເປັນຈຸດສົ່ງອອກນ້ຳມັນຂະໜາດໃຫຍ່ຂອງ ຣັດເຊຍ ໄດ້ສົ່ງຜົນກະທົບຕໍ່ການສົ່ງພະລັງງານຂອງ ຣັດເຊຍ ໄປຍັງຕະຫຼາດໂລກ ແລະ ເຮັດໃຫ້ ຣັດເຊຍ ຕ້ອງຢຸດຕິການສົ່ງອອກນ້ຳມັນ ນັບແຕ່ວັນທີ 01 ເມສາ 2026 ເປັນຕົ້ນໄປ. ຂະນະດຽວກັນ, ກອງທັບຣັດເຊຍ ສືບຕໍ່ໂຈມຕີພື້ນທີ່ຕ່າງໆໃນອູແກຣນຢ່າງຕໍ່ເນື່ອງ ໂດຍສະເພາະພື້ນຖານໂຄງລ່າງດ້ານພະລັງງານ ຕົກເປັນເປົ້າໂຈມຕີ ລວມທັງເມືອງທ່າເຮືອແຄມທະເລດຳ Odesa ຊຶ່ງມີຄວາມສຳຄັນຕໍ່ການສົ່ງອອກຂອງອູແກຣນ ພ້ອມນັ້ນ, ກໍຍັງມີການໂຈມຕີດ້ວຍໂດຣນຢູ່ໃກ້ແນວນ້າໃນເຂດ Donetsk ຢູ່ທາງພາກຕາເວັນອອກ ລວມທັງໃນເຂດ Kherson ທາງພາກໃຕ້ ແລະ ເຂດ Sumy ທີ່ຕັ້ງຢູ່ຕິດກັບຊາຍແດນຣັດເຊຍ. ພ້ອມກັນນັ້ນ, ສະຫະພາບເອີຣົບ ຍັງສືບຕໍ່ສະໜັບສະໜູນອູແກຣນ ທາງດ້ານງົບປະມານ ແລະ ອາວຸດຍຸດໂທປະກອນ ເປັນຕົ້ນແມ່ນໃນວັນທີ 21 ເມສາ 2026 ເຢຍລະມັນ ໄດ້ປະກາດການສະໜັບສະໜູນງົບປະມານທາງການທະຫານໃຫ້ອູແກຣນມູນຄ່າ 4 ຕື້ເອີໂຣ ເຊິ່ງປະກອບມີ ລູກສອນໄຟ Patroit, ການຮ່ວມກັນຜະລິດໂດຣນ ແລະ ການແບ່ງປັນຂໍ້ມູນໃນສະໜາມຮົບ.

**ມາດຕະການຂວ້ຳບາດຕໍ່ ຮັກສາການປະທານາທິບໍດີເວເນຊູເອລາ**: ວັນທີ 01 ເມສາ 2026, ສ.ອາເມຣິກາ ໄດ້ຍົກເລີກມາດຕະການຂວ້ຳບາດຕໍ່ ທ່ານນາງ Delcy Rodriguez, ຮັກສາການປະທານາທິບໍດີເວເນຊູເອລາ ໂດຍການລຶບຊື່ອອກຈາກບັນຊີລາຍຊື່ບຸກຄົນທີ່ຖືກກຳນົດໃຫ້ເປັນບຸກຄົນຕ້ອງຫ້າມພິເສດ. ການເຄື່ອນໄຫວດັ່ງກ່າວຖືເປັນສັນຍານໜຶ່ງຂອງການຮັດແໜ້ນການພົວພັນລະຫວ່າງ ທ່ານນາງ Delcy Rodriguez ແລະ ທ່ານ ໂດນັນ ທຣຳປະທານາທິບໍດີ ສ.ອາເມຣິກາ ທີ່ພະຍາຍາມເຂົ້າມາຄວບຄຸມການເມືອງເວເນຊູເອລາ ນັບຕັ້ງແຕ່ເຫດການບຸກຈັບກຸມທ່ານ ນິໂຄຣັດ ມາດູໂຣ, ອະດີດປະທານາທິບໍດີຂອງເວເນຊູເອລາ ໃນວັນທີ 3 ມັງກອນ 2026. ພ້ອມນັ້ນ, ທ່ານ ນາງ Delcy Rodriguez ຍັງສະແດງຄວາມຍິນດີຕໍ່ການຕັດສິນໃຈຂອງລັດຖະບານ ສ.ອາເມຣິກາ ພ້ອມທັງຮຽກຮ້ອງໃຫ້ຍົກເລີກມາດຕະການຂວ້ຳບາດເພີ່ມເຕີມຕໍ່ໜ່ວຍງານ ແລະ ບຸກຄົນໃນເວເນຊູເອລາ; ເປັນບາດກ້າວສຳຄັນໃນທິດທາງທີ່ຖືກຕ້ອງ ເພື່ອເຮັດໃຫ້ການພົວພັນລະຫວ່າງ ເວເນຊູເອລາ ແລະ ສ.ອາເມຣິກາ ກັບເຂົ້າສູ່ສະພາບປົກກະຕິ ແລະເຂັ້ມແຂງຍິ່ງຂຶ້ນ.

**ການເລືອກຕັ້ງຮົງກາລີ:** ວັນທີ 12 ເມສາ 2026, ຮົງກາລີ ໄດ້ຈັດການເລືອກຕັ້ງທົ່ວໄປ ຊຶ່ງມີປະຊາຊົນອອກມາໃຊ້ສິດເລືອກຕັ້ງຫຼາຍກວ່າ 08 ລ້ານຄົນ. ຜົນຂອງການເລືອກຕັ້ງແມ່ນ ພັກທິສຊາ (Tisza Party) ພັກຂວາກາງ ທີ່ນຳໂດຍ ທ່ານ ປີເຕີ ມາຢາ (Péter Magyar), ອະດີດນັກການເມືອງທີ່ເຄີຍສັງກັດຢູ່ພັກຝ່າຍດຽວກັບລັດຖະບານ ແຕ່ໄດ້ແຍກຕົວອອກມາສ້າງຕັ້ງພັກຝ່າຍຄ້ານ ໄດ້ຮັບໄຊຊະນະ ແບບລົ້ນເຫຼືອ ໂດຍໄດ້ຮັບ 141 ບ່ອນນັ່ງ ຈາກທັງໝົດ 199 ບ່ອນນັ່ງໃນສະພາ ຫຼື ເກີນ 2/3, ສ່ວນຊູ່ແຂ່ງ ພັກຟິເດດສ໌ (Fidesz) ທີ່ນຳໂດຍ ທ່ານ ວິກເຕີ ອໍບານ (Viktor Orbán), ນາຍົກລັດຖະມົນຕີ ຊຶ່ງໄດ້ຮັບ 52 ບ່ອນນັ່ງ ຫຼຸດລົງ 83 ບ່ອນນັ່ງ ຈາກທີ່ເຄີຍໄດ້ 135 ບ່ອນນັ່ງ ໃນປີ 2022, ຊຶ່ງເປັນການປະລາໄຊ ຫຼັງຈາກການດຳລົງຕຳແໜ່ງມາເປັນເວລາ 16 ປີ ທີ່ມີສາເຫດມາຈາກ ຄວາມບໍ່ພໍໃຈຂອງປະຊາຊົນໃນການບໍລິຫານເສດຖະກິດທີ່ຜິດພາດ ເຮັດໃຫ້ມີອັດຕາເງິນເຟີ້ທີ່ສູງ. ສ່ວນ ນະໂຍບາຍຂອງ ພັກທິສຊາ ຈະເນັ້ນການແກ້ໄຂບັນຫາການສໍ້ລາດບັງຫຼວງ, ຄືນສິດເສລີພາບໃຫ້ກັບລະບົບຕຸລາການ ແລະ ຄືນສິດເສລີພາບໃຫ້ກັບສະ

ຖາບັນທາງການເມືອງອື່ນໆ ແລະ ຟື້ນຟູການຮ່ວມມືກັບ ສະຫະພາບເອີຣົບ ຫຼາຍຂຶ້ນ ເພາະໄລຍະຜ່ານມາ ລັດຖະບານຂອງທ່ານ ອໍບານ ໄດ້ດຳເນີນການພົວພັນໃກ້ຊິດກັບ ຣັດເຊຍ ລວມທັງການຕັດງົບປະມານຊ່ວຍເຫຼືອ ອູແກຣນ ທີ່ກຳລັງເຮັດສົງຄາມກັບ ຣັດເຊຍ. ຄາດວ່າ ກອງປະຊຸມສະພາ ຈະຈັດຂຶ້ນໃນວັນທີ 09 ພຶດສະພາ 2026 ເພື່ອຈັດຕັ້ງຄະນະລັດຖະບານຊຸດໃໝ່ ແລະ ທ່ານ ມາຢາ ປະກາດວ່າ ຈະເດີນທາງຢ້ຽມຢາມ ໂປໂລຍ ເປັນປະເທດທຳອິດ.

### 4. ພາກພື້ນຕາເວັນອອກກາງ

**ສະພາບຄວາມເຄັ່ງຕຶງ ລະຫວ່າງ ສ.ອາເມຣິກາ-ອິດສະຣາແອນ ກັບ ອີຣານ:** ອາເມຣິກາ ແລະ ອີຣານ ໂຈມຕີກັນໄປມາ ແຕ່ທ້າຍເດືອນກຸມພາ 2026 ເປັນຕົ້ນມາ, ໃນວັນທີ 08 ເມສາ 2026, ສ.ອາມຣິກາ ແລະ ອີຣານ ໄດ້ເຈລະຈາຜ່ານຜູ້ໄກ່ເກ່ຍປາກິດສະຖານ ທັງສອງຝ່າຍ ຍອມຮັບຂໍ້ຕົກລົງຢຸດຍິງຊົ່ວຄາວ ເປັນເວລາ 14 ວັນ ພ້ອມທັງອະນຸຍາດໃຫ້ມີການສັນຈອນຜ່ານຊ່ອງແຄບຮໍມຸດ ຕາມກຳນົດດັ່ງກ່າວ ພາຍໃຕ້ການຄວບຄຸມຂອງກອງທັບອີຣານ. ແຕ່ ອິດສະຣາແອນ ຍັງສືບຕໍ່ໂຈມຕີກຸ່ມຮິດສບານເລາະໃນລີບັງ ໂດຍອ້າງວ່າ ບໍ່ກ່ຽວຂ້ອງກັບຂໍ້ຕົກລົງຢຸດຍິງ ເຮັດໃຫ້ ອີຣານ ປິດຊ່ອງແຄບຮໍມຸດ ອີກຄັ້ງ. ສ່ວນການເຈລະຈາ ແບບເຊິ່ງໜ້າ ລະຫວ່າງ ສ.ອາເມຣິກາ ແລະ ອີຣານ ທີ່ ນະຄອນຫຼວງອິດສະລາມາບັດ ຂອງ ປາກິດສະຖານ ໃນວັນທີ 10 ເມສາ 2026, ບໍ່ສາມາດຕົກລົງກັນຢຸດຍິງຖາວອນໄດ້ ຍ້ອນຕ່າງຝ່າຍບໍ່ສາມາດຮັບເງື່ອນໄຂຂອງກັນ ແລະ ກັນໄດ້. ຂະນະທີ່, ອີຣານ ໄດ້ຢໍ້າຄືນສິດ ໃນການໃຊ້ພະລັງງານນິວເຄຼຍຢ່າງສັນຕິ ແລະ ຮຽກຮ້ອງໃຫ້ຍົກເລີກມາດຕະການຂວໍ້າບາດ ຊຶ່ງເປັນສ່ວນໜຶ່ງໃນການແກ້ໄຂບັນຫາ ແລະ ຢໍ້າວ່າ ບັນຫາໃນ ລີບັງ ຈະຕ້ອງລວມຢູ່ໃນຂໍ້ຕົກລົງຢຸດຍິງ. ຂະນະທີ່, ຂໍ້ຕົກລົງຢຸດຍິງ ໄດ້ສິ້ນສຸດລົງໃນວັນທີ 22 ເມສາ 2026, ປາກິດສະຖານໃນນາມຜູ້ໄກ່ເກຍ ໄດ້ຮຽກຮ້ອງໃຫ້ ສ.ອາເມຣິກາ ຂະຫຍາຍສັນຍາຢຸດຍິງອອກໄປ ຊຶ່ງ ສ.ອາເມຣິກາ ໄດ້ຕອບຮັບຂໍ້ສະເໜີດັ່ງກ່າວ ແລະ ຂະຫຍາຍການເວລາການຢຸດຍິງແບບບໍ່ມີກຳນົດ, ສ່ວນ ອີຣານ ບໍ່ເຫັນດີທີ່ຈະຂະຫາຍເວລາການຢຸດຍິງດັ່ງກ່າວ ແລະ ທັງບໍ່ມີແຜນຈະເຈລະຮອບ 02 ຍ້ອນ ສ.ອາເມຣິກາ ບໍ່ມີຄວາມຈິງໃຈຕໍ່ການຢຸດຍິງ ນັບແຕ່ວັນທີ 08 ເມສາ 2026 ເປັນຕົ້ນມາ ໂດຍໄດ້ປິດລ້ອມເຮືອອີຣານ ຢູ່ອ່າວໂອມານ, ຢຶດເຮືອສິນຄ້າຂອງອີຣານ ທີ່ເດີ່ນທາງມາຈາກ ສປ ຈີນ ໃນວັນທີ 19 ເມສາ 2026. ເຮັດໃຫ້ສະຖານະການໃນປັດຈຸບັນ ບໍ່ມີຄວາມແນ່ນອນ, ການປັບຂຶ້ນ-ລົງລາຄານໍ້າມັນໃນທົ່ວໂລກ ຍັງສົ່ງຜົນກະທົບຕໍ່ສະພາບເສດຖະ ກິດລວມຂອງໂລກ.

## II. ການເຄື່ອນໄຫວຂອງ ການນຳຂັ້ນສູງ

### 1) ເລຂາທິການໃຫຍ່, ປະທານປະເທດ ສສ ຫວຽດນາມ ສົ່ງຈົດໝາຍອວຍພອນປີໃໝ່ລາວ ເຖິງ ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປ ລາວ

ສະຫາຍ ໂຕ ເລິມ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ປະທານປະເທດ ແຫ່ງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ສົ່ງຈົດໝາຍອວຍພອນປີໃໝ່ລາວ ພສ 2569 ເຖິງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ໂດຍເນື້ອໃນຂອງຈົດໝາຍອວຍພອນ ມີດັ່ງນີ້:

ເນື່ອງໃນໂອກາດ ບຸນປະເພນີປີໃໝ່ລາວ, ຕາງໜ້າ ພັກ, ລັດ ແລະ ປະຊາຊົນຫວຽດນາມ, ຂ້າພະເຈົ້າ ຂໍຖືເປັນກຽດ ສົ່ງຄຳອວຍພອນໄຊອັນປະເສີດ ມາຍັງ ສະຫາຍ ແລະ ບັນດາສະຫາຍການນຳ ພັກ, ລັດ ແລະ ປະຊາຊົນລາວ.

ຂ້າພະເຈົ້າ ຮູ້ສຶກປິຕິຊົມຊື່ນເປັນຢ່າງຍິ່ງ ທີ່ເຫັນວ່າ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ຫວຽດນາມ-ລາວ ໄດ້ຮັບການປັບປຸງຢ່າງບໍ່ຢຸດຢັ້ງ, ນັບມື້ໄດ້ຮັບການພັດທະນາຢ່າງເລິກເຊິ່ງ, ແທດເໝາະກັບຕົວຈິງ ແລະ ມີປະສິດທິຜົນ; ພິເສດ, ການທີ່ສອງປະເທດພວກເຮົາ ໄດ້ເພີ່ມເຕີມເນື້ອໃນ "ການເປັນຫຸ້ນສ່ວນຍຸດທະສາດ" ໃນປີ 2025, ເຊິ່ງເປັນຂີດໝາຍອັນສຳຄັນ, ກຳນົດທິດອັນຍາວນານໃຫ້ແກ່ການພົວພັນ ລະຫວ່າງ ສອງພັກ, ສອງລັດ; ສ້າງພື້ນຖານອັນໝັ້ນຄົງໃຫ້ແກ່ການພັດທະນາ ເພື່ອຜົນປະໂຫຍດຂອງປະຊາຊົນ, ເພື່ອສັນຕິພາບ, ສະຖຽນລະພາບ ຢູ່ໃນພາກພື້ນ. ຂ້າພະເຈົ້າ ເຊື່ອໝັ້ນວ່າ ພາຍໃຕ້ການນຳພາຂອງ ພັກປະຊາ ຊົນປະຕິວັດລາວ, ນຳໜ້າໂດຍ ສະຫາຍ ທອງລຸນ ສີສຸລິດ, ປະເທດຊາດລາວ ຈະສືບຕໍ່ຍາດໄດ້ຜົນສຳເລັດອັນໃຫຍ່ຫຼວງ ຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII, ແຜນພັດທະນາເສດຖະກິດ - ສັງຄົມ 5 ປີ ຄັ້ງທີ X ຢ່າງມີໄຊ, ສ້າງປະເທດຊາດໃຫ້ນັບມື້ວັດທະນະຖາວອນ, ປະຊາຊົນນັບມື້ອີ່ມໜຳສຳລານ, ມີຄວາມຜາສຸກ.

ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈມາຍັງ ສະຫາຍ ທີ່ໄດ້ສົ່ງຄຳອວຍພອນໄຊອັນປະເສີດມາຍັງ ຂ້າພະເຈົ້າ ໃນໂອກາດທີ່ໄດ້ຮັບເລືອກຕັ້ງໃຫ້ດຳລົງຕຳແໜ່ງເປັນ ປະທານປະເທດ ແຫ່ງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ໃນວາລະກອງປະຊຸມຄັ້ງປະຖົມມະລຶກຂອງ ສະພາແຫ່ງຊາດ ຊຸດທີ XVI ຄັ້ງວັນທີ 7 ເມສາ 2026.

ອວຍພອນໃຫ້ ສາຍພົວພັນສາມັກຄີພິເສດ ຫວຽດນາມ-ລາວ, ລາວ-ຫວຽດນາມ ຈົ່ງສວຍສົດງົດງາມ ແລະ ໝັ້ນຄົງທະນົງແກ່ນຕະຫຼອດໄປ.

### 2) ຜູ້ປະຈຳການຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ ຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ




ໃນວັນທີ 9 ເມສາ 2026, ສະຫາຍ ເຈິນ ເກິ໋ມ ຕູ໋, ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງ ພັກ, ລັດ ສສ ຫວຽດນາມ ໄດ້ເດີນທາງມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ. ໂດຍໄດ້ຮັບການຕ້ອນຮັບຈາກ ສະຫາຍ ວິໄລ ຫຼ້າຄຳຟອງ, ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການ ຄະນະເລຂາທິການສູນກາງພັກປະຊາຊົນປະຕິວັດລາວ.

ສອງຝ່າຍ ເຫັນດີເປັນເອກະພາບ ແລະ ຕີລາຄາສູງຕໍ່ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລາວ-ຫວຽດນາມ, ຫວຽດນາມ-ລາວ ທີ່ໄດ້ຍົກລະດັບຂຶ້ນສູ່ລະດັບ

ສູງໃໝ່ ໃຫ້ສືບຕໍ່ມີການຂະຫຍາຍຕົວຮອບດ້ານ, ເລິກເຊິ່ງ ແລະ ມີຄຸນນະພາບຫຼາຍກວ່າເກົ່າ; ການຮ່ວມມືດ້ານການເມືອງ ສືບຕໍ່ມີຄວາມໜັກແໜ້ນ, ສ້າງໄດ້ຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ ໃນລະດັບສູງສຸດ; ການຮ່ວມມືດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ ນັບມື້ໄດ້ຮັບການເສີມຂະຫຍາຍຢ່າງມີປະສິດທິຜົນ; ການຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນ, ເຕັກໂນໂລຊີ, ວັດທະນະທຳ-ສັງຄົມ, ການສຶກສາ ແລະ ອື່ນໆ ນັບມື້ນັບໄດ້ຮັບການເພີ່ມທະວີ ແລະ ນຳຜົນປະໂຫຍດຢ່າງເປັນຮູບປະທຳ ມາສູ່ປະຊາຊົນສອງຊາດ.

ສອງຝ່າຍ ຕ່າງກໍ່ສະແດງຄວາມຮູ້ບຸນຄຸນອັນລົ້ນເຫຼືອ ແລະ ຂອບໃຈຢ່າງຈິງໃຈ ຕໍ່ການສະໜັບສະໜູນຊ່ວຍ ເຫຼືອອັນລ້ຳຄ່າ, ທັນການ, ມີປະສິດທິຜົນ ແລະ ຈິງໃຈ ທີ່ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ, ຫວຽດນາມ-ລາວ ມີແກ່ກັນຕະຫຼອດໄລຍະດຳເນີນພາລະກິດຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ ກໍ່ຄື ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງລາວ ໃນປັດຈຸບັນ.

ໃນໂອກາດນີ້, ສອງຝ່າຍ ກໍ່ໄດ້ມີການລົງນາມ ແລະ ມອບ-ຮັບ ເອກະສານການຮ່ວມມືສອງຝ່າຍ ເຊັ່ນ: ໂຄງການຮ່ວມມືກ່ຽວກັບວຽກງານ ຂາເຂົ້າ-ຂາອອກ, ສຳເນົາເອກະສານ, ຫໍສະໝຸດ ໄລຍະ 2026 - 2030 ລະຫວ່າງ ຫ້ອງວ່າການສູນກາງພັກປະຊາຊົນປະຕິວັດລາວ ແລະ ຫ້ອງວ່າການສູນກາງພັກກອມມູນິດຫວຽດນາມ; ບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ແຂວງຫຼວງນ້ຳທາ ສປປ ລາວ ແລະ ແຂວງດ້ຽນບຽນ ສສ ຫວຽດນາມ ໄລຍະ 2026 – 2029.

### 3) ຄະນະຜູ້ແທນຜູ້ຕາງໜ້າພິເສດຂອງ ສະຫາຍເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປະຊາຊົນປະຕິວັດລາວ ຢ້ຽມຢາມ ສປ ຈີນ



ສະຫາຍ ສະເຫຼີມໄຊ ກົມມະສິດ, ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ຜູ້ຕາງໜ້າພິເສດຂອງ ສະຫາຍ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປະຊາຊົນປະຕິວັດລາວ ພ້ອມດ້ວຍຄະນະ ໄດ້ເດີນທາງໄປຢ້ຽມຢາມ ສປ ຈີນ ໃນລະຫວ່າງວັນທີ 20-22 ເມສາ 2026 ເພື່ອແຈ້ງຜົນສຳເລັດຂອງ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງ ພັກ ປປ ລາວ ຕໍ່ການນຳ ພັກ, ລັດ ສປ ຈີນ.

ໃນຕອນບ່າຍຂອງວັນທີ 21 ເມສາ 2026, ສະຫາຍ ສະເຫຼີມໄຊ ກົມມະສິດ ພ້ອມຄະນະ ໄດ້ເຂົ້າຢ້ຽມຂ່ຳນັບ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດແຫ່ງ ສປ ຈີນ. ສະຫາຍ ສະເຫຼີມໄຊ ກົມມະສິດ ໄດ້ນຳເອົາຄວາມຢື້ຢາມຖາມຂ່າວ ແລະ ຈົດໝາຍທາງວາຈາທີ່ຂຽນດ້ວຍລາຍມືຈາກ ສະຫາຍ ທອງລຸນ ສີສຸລິດ ໄປຍັງ ສະຫາຍ ສີ ຈິ້ນຜິງ ແລະ ບັນດາສະຫາຍການນຳ ພັກ, ລັດ ຈີນ; ແຈ້ງຜົນສຳເລັດກອງປະຊຸມໃຫຍ່ ຄັ້ງທີ XII ຂອງ ພັກ ປປ ລາວ, ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XX ໂດຍສະເພາະຜົນສຳເລັດກອງປະຊຸມຄົບຄະນະ ຄັ້ງທີ 4 ສະໄໝທີ XX ຂອງພັກກອມມູນິດຈີນທີ່ໄດ້ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 15 ໃນທ້າຍປີຜ່ານມາ; ຊົມເຊີຍຜົນສຳເລັດກອງປະຊຸມສະພາປຶກສາການເມືອງທົ່ວປະເທດຈີນ ແລະ ສະພາຜູ້ແທນປະຊາຊົນແຫ່ງຊາດຈີນ ຄັ້ງທີ 4 ສະໄໝທີ XIV ໃນຕົ້ນເດືອນມີນາຜ່ານມາ ແລະ ບັນດາຜົນສຳເລັດໃນດ້ານຕ່າງໆ ທີ່ປະຊາຊົນຈີນອ້າຍນ້ອງ ຍາດມາໄດ້ ພາຍໃຕ້ການນຳພາຂອງ ພັກກອມມູນິດຈີນ ໃນການສ້າງສາພັດທະນາປະເທດຈີນ ກໍຄື ການຫັນເປັນທັນສະໄໝຕາມ "ແນວຄິດ ສີ

ຈິ້ນຜິງ ວ່າດ້ວຍ ສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ໃນຍຸກສະໄໝ ໃໝ່”, ອັນໄດ້ເຮັດໃຫ້ບົດບາດ ແລະ ອິດທິພົນຂອງ ພັກ, ລັດຈີນ ນັບມື້ນັບສູງເດັ່ນໃນເວທີພາກພື້ນ ແລະ ສາກົນ.

ໃນວັນດຽວກັນ, ສະຫາຍ ສະເຫຼີມໄຊ ກົມມະສິດ ຍັງໄດ້ພົບປະກັບ ສະຫາຍ ຫວັງອີ້, ກຳມະການກົມການເມືອງສູນກາງພັກ, ລັດຖະມົນຕີການຕ່າງປະເທດ ສປ ຈີນ; ສະຫາຍ ຫຼີວ ຮາຍຊີງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ; ສອງຝ່າຍ ໄດ້ແຈ້ງສະພາບການພົ້ນເດັ່ນຂອງແຕ່ລະພັກ, ແຕ່ລະປະເທດໃຫ້ກັນຊາບ, ພ້ອມກັນສັງເກດຕີລາຄາຄືນການພົວພັນຮ່ວມມື 2 ຝ່າຍ, ການຈັດຕັ້ງຜັນຂະຫຍາຍແຜນແມ່ບົດ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ໃນໄລຍະຜ່ານມາ, ປຶກສາຫາລືກ່ຽວກັບ ທິດທາງຮ່ວມມືໃນຕໍ່ໜ້າ ແລະ ຢືນຢັນຈະສືບຕໍ່ປະສານສົມທົບຢ່າງແໜ້ນແຟ້ນ ໃນການຊຸກຍູ້ເສີມຂະຫຍາຍສາຍພົວພັນ ລາວ-ຈີນ, ເຊິ່ງປີນີ້ ເປັນປີມິດຕະພາບແຫ່ງການສ້າງຕັ້ງສາຍພົວພັນການທູດ ລາວ-ຈີນ, ຈີນ-ລາວ ຄົບຮອບ 65 ປີ, ສອງຝ່າຍ ຈະຊີ້ນຳພາກສ່ວນກ່ຽວຂ້ອງກະກຽມບັນດາກິດຈະກຳຕ່າງໆ ເພື່ອສະເຫຼີມສະຫຼອງ ໃຫ້ເປັນຂະບວນຟົດຟື້ນ ແລະ ມີເນື້ອໃນຄົບຖ້ວນ.

## III. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ

**1) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບ ເອກອັກຄະລັດຖະທູດ ສສ ຫວຽດນາມ ປະຈຳ ສປປ ລາວ ເຂົ້າອວຍພອນປີໃໝ່ລາວ ພສ 2569**




ໃນຕອນເຊົ້າຂອງວັນທີ 8 ເມສາ 2026, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍພະນັກງານຫຼັກແຫຼ່ງຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບ ສະຫາຍ ຫງວຽນ ມິງ ເຕິມ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ ພ້ອມດ້ວຍພະນັກງານຫຼັກແຫຼ່ງຂອງສະຖານທູດ ແລະ ບັນດາຫ້ອງການຜູ້ຕາງໜ້າ ສສ ຫວຽດນາມ ປະຈຳ ສປປ ລາວ ເຂົ້າອວຍພອນ ເນື່ອງໃນໂອກາດປີໃໝ່ລາວ ພສ 2569.

ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ຕາງໜ້າ ຄະນະພັກ-ຄະນະນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ສະແດງຄວາມຂອບໃຈຕໍ່ ສະຫາຍ ຫງວຽນ ມິງ ເຕິມ ພ້ອມຄະນະ ທີ່ໄດ້ມາອວຍພອນ ເນື່ອງໃນໂອກາດປີໃໝ່ລາວ ພສ 2569, ເຊິ່ງໄດ້ນຳເອົາໄມຕີຈິດ, ຄວາມສາມັກຄີຮັກແພງ ຖານມິດສະຫາຍອ້າຍນ້ອງທີ່ໃກ້ຊິດ ແລະ ຄຳອວຍພອນໄຊອັນປະເສີດ ມາຍັງ ຄະນະພັກ-ຄະນະນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ທຸກຖ້ວນໜ້າ; ໄດ້ຕີລາຄາສູງ ຕໍ່ການປະກອບສ່ວນຂອງ ສະຖານທູດ ໃນການປະສານສົມທົບຢ່າງແໜ້ນແຟ້ນ ກັບ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ພາກສ່ວນຕ່າງໆຂອງລາວ ໃນການເປັນເສນາທິການ, ເປັນຂົວຕໍ່ ແລະ ຕິດຕາມ ຊຸກຍູ້ບັນດາກະຊວງ, ອົງການ, ຂະແໜງການ ແລະ ທ້ອງຖິ່ນ ຂອງສອງປະເທດ ຈັດຕັ້ງຜັນຂະຫຍາຍບັນດາ ຂໍ້ຕົກລົງຂອງການນຳຂັ້ນສູງຂອງສອງພັກ, ສອງລັດ ໃຫ້ບັນລຸຕາມແຜນການ ແລະ ເປົ້າໝາຍທີ່ວາງໄວ້, ປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງ ແລະ ເພີ່ມທະວີສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ນັບມື້ນັບກ້າວເຂົ້າສູ່ລວງເລິກ ແລະ ມີປະສິດທິຜົນຍິ່ງໆຂຶ້ນໄປ.

ສະຫາຍ ຫງວຽນ ມິງ ເຕິມ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ບັນດາຜົນສຳເລັດທີ່ ພັກ, ລັດຖະບານ ແລະ ປະຊາຊົນລາວ ບັນດາເຜົ່າ ຍາດມາໄດ້ຕະຫຼອດໄລຍະແຫ່ງການປ່ຽນແປງໃໝ່ ກໍຄື ການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໄດ້ຢ່າງມີໄຊ ແລະ ຕີລາຄາສູງ ຕໍ່ການປະກອບສ່ວນສຳຄັນຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າໃນຜົນສຳເລັດລວມຂອງ ສປປ ລາວ ກໍຄື ການປະກອບສ່ວນເຂົ້າໃນການເສີມສ້າງ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລາວ-ຫວຽດນາມ, ຫວຽດນາມ-ລາວ.

**2) ສານອວຍພອນປີໃໝ່ລາວ ພ.ສ 2569**

ເນື່ອງໃນໂອກາດອັນສະຫງ່າລາສີ ບຸນກຸດສົງການ ຫຼື ບຸນປີໃໝ່ລາວ ພສ 2569 (ປີມະເມຍ) ທີ່ຈະໝູນວຽນມາເຖິງນີ້, ຂ້າພະເຈົ້າ ຂໍຕາງໜ້າໃຫ້ຄະນະພັກ, ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ, ໃນນາມສ່ວນຕົວ ແລະ ຄອບຄົວ, ຂໍສົ່ງຄຳຢື້ຢາມຖາມຂ່າວ ອັນອົບອຸ່ນ ແລະ ພອນໄຊອັນປະເສີດ

ມາຍັງ ບັນດາສະຫາຍສະມາຊິກພັກ, ພະນັກງານ ຂອງຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄອບຄົວທຸກຖ້ວນໜ້າ.

ບັນດາສະຫາຍທີ່ຮັກແພງ, ປີມະເສັງ ທີ່ກຳລັງຈະຜ່ານພົ້ນໄປນັ້ນ ເປັນປີທີ່ພວກເຮົາໄດ້ສະແດງນ້ຳໃຈ ເສຍສະຫຼະຢ່າງສູງສົ່ງ ອັນເນື່ອງມາຈາກ ສະຖານະການຂອງພາກພື້ນ ແລະ ທົ່ວໂລກ ທີ່ຍັງສືບຕໍ່ຜັນແປໄປຢ່າງສັບສົນ ບວກກັບສະພາບຄວາມຫຍຸ້ງຍາກທາງເສດຖະກິດ ສິ່ງຜົນກະທົບຕໍ່ຄ່າຄອງຊີບທີ່ສູງຢູ່ແລ້ວນັ້ນ ກໍຍິ່ງສືບຕໍ່ຖີບຕົວສູງຂຶ້ນເລື້ອຍໆ, ເຊິ່ງກາຍເປັນອຸປະສັກອັນໃຫຍ່ຫຼວງຕໍ່ການປະຕິບັດໜ້າທີ່ ແລະ ສິ່ງຜົນກະທົບໂດຍກົງຕໍ່ການດຳລົງຊີວິດຂອງພວກເຮົາ, ແຕ່ເຖິງຢ່າງໃດກໍຕາມ ບັນດາສະຫາຍ ກໍຍັງສືບຕໍ່ປະກອບສ່ວນທັງເຫື່ອແຮງ ແລະ ສະຕິປັນຍາຂອງຕົນດ້ວຍຄວາມເປັນເຈົ້າການ ແລະ ຮັບຜິດຊອບສູງຕໍ່ໜ້າທີ່ການເມືອງທີ່ຂັ້ນເທິງມອບໝາຍໃຫ້ ເພື່ອເຄື່ອນໄຫວວຽກງານການຕ່າງປະເທດດ້ານພັກ ແລະ ການທູດປະຊາຊົນ ໃຫ້ໄດ້ຮັບໝາກຜົນສູງສຸດ. ຂ້າພະເຈົ້າ ຂໍສະແດງຄວາມຍ້ອງຍໍຊົມເຊີຍຢ່າງຈິງໃຈ ແລະ ເຊື່ອໝັ້ນຢ່າງໜັກແໜ້ນວ່າ ພວກເຮົາຈະສາມາດຜ່ານຜ່າອຸປະສັກ ແລະ ຄວາມຫຍຸ້ງຍາກນາໆປະການນີ້ໄດ້ຄືໃນຫຼາຍໆຄັ້ງທີ່ຜ່ານມາ.

ເພື່ອຕ້ອນຮັບ ປີມະເມຍ ທີ່ຈະກາຍເປັນອີກປີໜຶ່ງທີ່ມີຄວາມໝາຍສຳຄັນນີ້ ພວກເຮົາຈະໄດ້ຮ່ວມແຮງຮ່ວມໃຈກັນ ໃນການເປັນເຈົ້າການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃຫ້ປະກົດຜົນເປັນຈິງ. ດັ່ງນັ້ນ, ຂ້າພະເຈົ້າ ຈຶ່ງຂໍຮຽກຮ້ອງ ມາຍັງ ບັນດາສະຫາຍ ສະມາຊິກພັກ-ພະນັກງານ ຄຕພ ທຸກຖ້ວນໜ້າ ຈົ່ງສືບຕໍ່ເພີ່ມທະວີການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນໃຫ້ປະສົບຜົນສຳເລັດໃໝ່, ຫຼິ້ນບຸນປີໃໝ່ດ້ວຍຄວາມເບີກບານມ່ວນຊື່ນ ແລະ ຖືກຕ້ອງຕາມຮີດຄອງປະເພນີອັນດີງາມຂອງຊາດ, ຮັກສາໄດ້ຄວາມສາມັກຄີ ແລະ ຄວາມປະຢັດມັດທະຍັດ.

ອີກເທື່ອໜຶ່ງ, ໃນໂອກາດບຸນປີໃໝ່ລາວນີ້, ຂ້າພະເຈົ້າ ພ້ອມດ້ວຍຄອບຄົວ ຂໍອວຍພອນໄຊ ມາຍັງ ບັນດາສະຫາຍ ແລະ ຄອບຄົວທຸກຖ້ວນໜ້າ ຈົ່ງມີສຸຂະພາບແຂງແຮງ, ພະລານາໄມສົມບູນ; ຂໍໃຫ້ປີມະເມຍ ເປັນປີທີ່ນຳມາແຕ່ຄວາມຢູ່ເຢັນເປັນສຸກ, ໂຊກໄຊ ແລະ ຄວາມສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ ດ້ວຍເຖີດ.

**3) ວາງສະແດງຮູບພາບ ແລະ ປາຖະກະຖາ ສະຫຼອງ ວັນສ້າງຕັ້ງ ສາຍພົວພັນການທູດ ລາວ-ຈີນ**






ໃນວັນທີ 24 ເມສາ 2026, ຄະນະໂຄສະນາອົບຮົມສູກາງພັກ ແລະ ສະຖານເອກອັກຄະລັດຖະທູດ ສປ ຈີນ ປະຈຳລາວ ຮ່ວມກັບ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດງານວາງສະແດງຮູບພາບ ແລະ ພິທີປາຖະກະຖາ ສະເຫຼີມສະຫຼອງ ວັນສ້າງຕັ້ງສາຍພົວພັນການທູດ ລາວ-ຈີນ ຄົບຮອບ 65ປີ ແລະ ປີມິດຕະພາບລາວ-ຈີນ ທີ່ຫ້ອງວ່າການສູນກາງພັກ, ໃຫ້ກຽດເຂົ້າຮ່ວມໂດຍ ສະຫາຍ ຄຳພັນ ເຜີຍຍະວົງ ກຳມະການກົມການເມືອງສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ສະຫາຍ ນາງ ຟາງຫົງ ເອກອັກຄະລັດຖະທູດ ວິສາມັນຜູ້ມີອຳນາດເຕັມ ແຫ່ງສປ ຈີນ ປະຈຳ ສປປ ລາວ, ມີບັນດາການນຳພັກ-ລັດ, ພະນັກງານຈາກສະຖານທູດ ສປ ຈີນ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີ, ສະຫາຍ ຄຳພັນ ເຜີຍຍະວົງ ແລະ ສະຫາຍ ນາງ ຟາງຫົງ ໄດ້ໃຫ້ກຽດຕັດແຖບຜ້າ ເປີດງານວາງສະແດງຮູບພາບຢ່າງເປັນທາງການ, ຮູບພາບທີ່ນຳມາວາງສະແດງຄັ້ງນີ້: ໄດ້ແບ່ງອອກເປັນ 3 ພາກ, ປະກອບມີ 75 ຮູບພາບ ຊຶ່ງແຕ່ລະຮູບພາບ ແມ່ນໄດ້ທອນຄືນມູນເຊື້ອຄວາມສາມັກຄີທີ່ເຕັມໄປດ້ວຍຄວາມຜູກພັນ, ໄມຕີຈິດມິດຕະພາບ ແລະ ມີ

ຊີວິດຊີວາ ຕະຫຼອດໄລຍະ 65 ປີ ຜ່ານມາ ແລະ ພ້ອມຈັບມືກັນກ້າວເດີນໄປສູ່ອະນາຄົດທີ່ສົດໃສ, ຈາກນັ້ນ, ບັນດາຜູ້ແທນໄດ້ເຂົ້າຮ່ວມຮັບຟັງການປາຖະກະຖາ ສະເຫຼີມສະຫຼອງ ວັນສ້າງຕັ້ງ ສາຍພົວພັນການທູດ ລາວ-ຈີນ ຄົບຮອບ 65 ປີ ແລະ ປີມິດຕະພາບລາວ-ຈີນ.

ສະຫາຍ ຄຳພັນ ເຜີຍຍະວົງ ກ່າວຄຳເຫັນວ່າ: ສອງປະເທດ ລາວ-ຈີນ ເປັນປະເທດບ້ານໃກ້ເຮືອນຄຽງທີ່ມີສາຍພູ, ສາຍນ້ຳຕິດຈອດກັນ, ມີລະບອບການເມືອງ ແລະ ທິດທາງການພັດທະນາປະເທດຊາດ ທີ່ຄ້າຍຄືກັນ, ປະຊາຊົນສອງຊາດ ມີມູນເຊື້ອການພົວພັນໄປມາຫາສູ່ກັນມາແຕ່ບູຮານນະການ. ພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດຈີນ ມີການພົວພັນນຳກັນ ແຕ່ປີ 1959, ຫຼັງຈາກນັ້ນ 2 ປີ ສອງປະເທດ ໄດ້ສ້າງຕັ້ງສາຍພົວພັນການທູດນຳກັນ ໃນວັນທີ 25 ເມສາ 1961. ປະທານ ເໝົາເຈີຕຶງ, ປະທານ ໄກສອນ ພົມວິຫານ ແລະ ບັນດາຜູ້ນຳຮຸ່ນຕ່າງໆ ລ້ວນແຕ່ໄດ້ນຳພາເພີ່ມພູນຄູນສ້າງສາຍພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ໃຫ້ໄດ້ຮັບການຂະຫຍາຍຕົວເປັນກ້າວໆມາ,ໃນປີເລີ່ມຕົ້ນຂອງສັດຕະວັດທີ 21 (ປີ 2000), ສອງປະເທດໄດ້ລົງນາມ ໃນການຖະແຫຼງການຮ່ວມ ກ່ຽວກັບການເພີ່ມທະວີພາຄີ ລະຫວ່າງ ສອງປະເທດ ໂດຍໄດ້ກຳນົດໃຫ້ການພົວພັນສອງປະເທດ ທີ່ຂຽນເປັນຕົວໜັງສືຈີນ 16 ຕົວ ກໍຄື "ການພົວພັນຮ່ວມມືຮອບດ້ານທີ່ໝັ້ນຄົງຍາວນານ, ມີໄມຕີຈິດຖານບ້ານໃກ້ເຮືອນຄຽງ ແລະ ໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ". ນັບແຕ່ນັ້ນມາ, ການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດຖະບານ ແລະ ປະຊາຊົນສອງຊາດ ລາວ-ຈີນ ກໍ່ນັບມື້ນັບໄດ້ຮັບການເສີມຂະຫຍາຍໃຫ້ແຕກດອກອອກຜົນເລື້ອຍໆມາ, ການນຳຂັ້ນສູງຂອງສອງຝ່າຍ ໄດ້ມີການໄປມາຫາສູ່ ພົບປະແລກປ່ຽນຄຳຄິດຄຳເຫັນນຳກັນເປັນປະຈຳທຸກປີ, ຕໍ່ມາປີ 2006, ສອງປະເທດກໍ່ໄດ້ຍົກລະດັບການພົວພັນຂຶ້ນເປັນ "ຄູ່ຮ່ວມຍຸດທະສາດຮອບດ້ານ" ແລະ 2009 ຍົກລະດັບຂຶ້ນເປັນ "ຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ" (ບ້ານໃກ້ເຮືອນຄຽງທີ່ດີ, ເພື່ອນມິດທີ່ດີ, ສະຫາຍທີ່ດີ ແລະ ຄູ່ຮ່ວມມືທີ່ດີ), ເຊິ່ງເປັນການຢັ້ງຢືນໃຫ້ເຫັນເຖິງການຂະຫຍາຍຕົວຢ່າງບໍ່ຢຸດຢັ້ງຂອງມິດຕະພາບ ແລະ ການພົວພັນຮ່ວມມື ລາວ-ຈີນ. ມາຮອດປັດຈຸບັນ, ໂດຍພາຍໃຕ້ຄວາມເອົາໃຈໃສ່ຂອງ ສອງພັກ ແລະ ການນຳຂອງສອງປະເທດ ການພົວພັນຮ່ວມມື ລະຫວ່າງ ລາວ-ຈີນ ກໍຄື ການສ້າງຄູ່ຮ່ວມຊາຕາກຳລາວ-ຈີນ ໄດ້ສືບຕໍ່ເກີດດອກອອກຜົນຢ່າງບໍ່ຢຸດຢັ້ງ; ການຮ່ວມມືທາງດ້ານການເມືອງ ແລະ ຄວາມໝັ້ນຄົງ ລະຫວ່າງ ສອງຝ່າຍ ແມ່ນມີການຮ່ວມມືກັນຫຼາຍ ແລະ ດີທີ່ສຸດ. ໃນດ້ານເສດຖະກິດ: ສປ ຈີນ ໄດ້ກາຍເປັນປະເທດອັນດັບ 1 ຂອງການລົງທຶນຕ່າງປະເທດຢູ່ລາວ, ເປັນຄູ່ຄ້າໃຫຍ່ອັນດັບ 2 ຂອງລາວ ແລະ ນັກທ່ອງທ່ຽວຈີນ ກໍເປັນອັນດັບ 2 ຂອງນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຢູ່ລາວ; ນອກຈາກນັ້ນ, ຈີນ ຍັງເປັນປະເທດທີ່ມີໂຄງການຮ່ວມມືລົງທຶນອັນດັບ 1 ຢູ່ລາວ ໂດຍໄດ້ມີໂຄງການຮ່ວມມືຍຸດທະສາດທີ່ສຳຄັນ ເຊັ່ນ: ໂຄງການທາງລົດໄຟ ລາວ-ຈີນ, ໂຄງການທາງດ່ວນ ລາວ-ຈີນ, ໂຄງການສ້າງແລວເສດຖະກິດ ລາວ-ຈີນ, ເຂດເສດຖະກິດພິເສດ ແລະ ອື່ນໆອີກ.

ສະຫາຍ ນາງ ຟາງຫົງ ໄດ້ທົບທວນຄືນເສັ້ນທາງ 65 ປີຜ່ານມາ ສາຍພົວພັນຈີນ-ລາວ, ໄດ້ຜ່ານຜ່າການຜັນແປຂອງສະພາບການສາກົນແຕ່ອຸດົມການເບື້ອງຕົ້ນຍັງບໍ່ປ່ຽນແປງ, ໄດ້ຜ່ານຜ່າການທົດສອບຈາກຄວາມສ່ຽງຕ່າງໆ ແຕ່ຍັງຄົງໜັກແໜ້ນດັ່ງຫີນຜາ,ສາມາດສ້າງເສັ້ນທາງແຫ່ງ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນຢ່າງຈິງໃຈ ແລະ ການຢູ່ຮ່ວມກັນຢ່າງສັນຕິຂອງປະເທດ ບ້ານໃກ້ເຮືອນຄຽງ ທີ່ຕ່າງຝ່າຍຕ່າງມີຜົນປະໂຫຍດ, ສ້າງເສັ້ນທາງແຫ່ງ ການຮຽນຮູ້ເຊິ່ງກັນ ແລະ ກັນ ແລະ ກ້າວໄປຂ້າງໜ້າຮ່ວມກັນຂອງປະເທດສັງຄົມນິຍົມ, ແລະ ເປັນເສັ້ນທາງຕົວແບບແຫ່ງການຮ່ວມມືຊ່ວຍເຫຼືອ ແລະ ຮ່ວມກັນພັດທະນາຂອງປະເທດພວມພັດທະນາ, ສາເຫດຕົ້ນຕໍທີ່ເຮັດໃຫ້ສາຍພົວ ພັນ ຈີນ-ລາວ ສາມາດກ້າວຂຶ້ນສູ່ລະດັບໃໝ່ ແລະ ບັນລຸການບຸກທະລຸໃໝ່ໃນທ່າມກາງການຜັນແປຂອງສະພາບການ ໃນ 65 ປີຜ່ານມາ ກໍຄືການນຳແຕ່ລະຮຸ່ນຂອງສອງພັກ, ສອງລັດ ຍາມໃດກໍມີວິໄສທັດກວ້າງໄກ, ຊີ້ນຳ ແລະ ນຳພາທາງຍຸດທະສາດດ້ວຍຕົນເອງ. ໂດຍສະເພາະໃນຊຸມປີມໍ່ໆມານີ້, ສະຫາຍ ເລຂາທິການໃຫຍ່ ສີ ຈິ້ນຜິງ ໄດ້ບັນລຸຄວາມເຫັນດີ

ເປັນເອກະພາບທາງຍຸດທະສາດກັບການນຳສູງສຸດຂອງລາວ ໃນການສ້າງຄູ່ຮ່ວມຊະຕາກຳ ຈີນ-ລາວ, ແລະ ໃນປີ 2019 ແລະ 2023 ກໍໄດ້ຮ່ວມກັບ ສະຫາຍ ເລຂາທິການໃຫຍ່ ບຸນຍັງ ວໍລະຈິດ ແລະ ສະຫາຍ ເລຂາທິການໃຫຍ່ ທອງລຸນ ສີສຸລິດ ລົງນາມໃນແຜນປະຕິບັດງານສ້າງຄູ່ຮ່ວມຊະຕາກຳ ຈີນ-ລາວ ດ້ວຍຕົນເອງທັງສອງສະບັບ, ເຊິ່ງໄດ້ກາຍເປັນທິດທາງລວມ ແລະ ແຜນຜັງໃໝ່ໃຫ້ແກ່ການຮ່ວມມືຮອບດ້ານລະຫວ່າງສອງປະເທດ, ຊຸກຍູ້ສາຍພົວພັນສອງຝ່າຍໃຫ້ກ້າວເຂົ້າສູ່ຍຸກສະໄໝໃໝ່ດ້ວຍຄວາມໄວສູງ.

## VI. ການເຄື່ອນໄຫວຂອງ ອົງການຈັດຕັ້ງມະຫາຊົນ ພາຍໃນ ຄຕພ

### 1. ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ຈັດພິທີ ປະຖະກະຖາ ວັນກຳມະກອນສາກົນ ຄົບຮອບ 140 ປີ



ໃນວັນທີ 30 ເມສາ 2026, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີປາຖະກະຖາເລົ່າມູນເຊື້ອວັນກຳມະກອນສາກົນ ຄົບຮອບ 140 ປີ (01 ພຶດສະພາ 1886-01 ພຶດສະພາ 2026) ເພື່ອລະລຶກເຖິງປະຫວັດສາດແຫ່ງການຕໍ່ສູ້ ແລະ ສິ່ງເສີມບົດບາດຂອງຊົນຊັ້ນກຳມະກອນໃນການພັດທະນາປະເທດຊາດ, ເຊິ່ງໃຫ້ກຽດເປັນປະທານ ແລະ ປາຖະກະຖາໂດຍ ທ່ານ ນາງ ອາລຸນແສງ ວິຈິດວົງສາ, ຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ, ຫົວໜ້າກົມໂຄສະນາ ສູນກາງສະຫະພັນກຳມະບານລາວ ແລະ ມີທ່ານຄະນະພັກຄະນະນຳ ພ້ອມດ້ວຍບັນດາສະມາຊິກກຳມະບານ ພາຍໃນ ຄຕພ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ນາງ ອາລຸນແສງ ວິຈິດວົງສາ ໄດ້ຍົກໃຫ້ເຫັນເຖິງປະຫວັດຄວາມເປັນມາ ແລະ ມູນເຊື້ອແຫ່ງການຕໍ່ສູ້ອັນພິລະອາດຫານຂອງຊົນຊັ້ນກຳມະກອນໃນໂລກ, ໂດຍສະເພາະແມ່ນເຫດການລຸກຮືຂຶ້ນຕໍ່ສູ້ຂອງກຳມະກອນຢູ່ນະຄອນຊິຄາໂກ, ປະເທດສະຫະລັດອາເມລິກາ ໃນປີ 1886 ເພື່ອທວງເອົາສິດຜົນປະໂຫຍດອັນຊອບທຳໃນການເຄື່ອນໄຫວວຽກງານ ແລະ ການແບ່ງປັນຜົນປະໂຫຍດຈາກການພັດທະນາ ເຊັ່ນ: ຮຽກຮ້ອງໃຫ້ກຳນົດຊົ່ວໂມງເຮັດວຽກ 8 ຊົ່ວໂມງຕໍ່ວັນ ແລະ 8 ຊົ່ວໂມງພັກຜ່ອນ; ເຫດການດັ່ງກ່າວໄດ້ກາຍ ເປັນສັນຍາລັກແຫ່ງໄຊຊະນະ ແລະ ເປັນຕົ້ນກຳເນີດຂອງວັນກຳມະກອນສາກົນ ທີ່ທົ່ວໂລກໄດ້ສະເຫຼີມສະຫຼອງມາຮອດປັດຈຸບັນ. ພ້ອມກັນນີ້, ທ່ານຍັງໄດ້ກ່າວເນັ້ນເຖິງການເຕີບໃຫຍ່ຂະຫຍາຍຕົວຂອງຊົນຊັ້ນກຳມະກອນລາວ ພາຍໃຕ້ການນຳພາ-ຊີ້ນຳຂອງພັກປະຊາຊົນ ປະຕິວັດລາວ, ເຊິ່ງພັກເຮົາໄດ້ຖືວ່າ ກຳມະກອນ ແລະ ຊາວຜູ້ອອກແຮງງານລາວ ໄດ້ກາຍເປັນກຳລັງແຮງຕົ້ນຕໍ ໃນການຜະລິດ ແລະ ການຂັບເຄື່ອນເສດຖະກິດ-ສັງຄົມ ໃຫ້ມີການຫັນປ່ຽນໄປສູ່ຄວາມທັນສະໄໝ, ປະກອບສ່ວນຮ່ວມຢ່າງຕັ້ງໜ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນແຕ່ລະໄລຍະ.

ທ່ານ ນາງ ອາລຸນແສງ ວິຈິດວົງສາ ຍັງໄດ້ຮຽກຮ້ອງໃຫ້ຄະນະບໍລິຫານງານສະຫະພັນກຳມະບານ ແລະ ສະມາຊິກກຳມະບານ ຄຕພ ທຸກຄົນ ຈົ່ງເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ, ເອົາໃຈໃສ່ຝຶກຝົນຫຼໍ່ຫຼອມຕົນເອງ, ຍົກສູງລະດັບວິຊາສະເພາະ ໃຫ້ໄດ້ມາດຕະຖານ ແລະ ມີວິໄນໃນການເຮັດວຽກຢ່າງເຂັ້ມງວດ ເພື່ອໃຫ້ສາມາດປັບຕົວເຂົ້າກັບຍຸກ

ເສດຖະກິດດີຈິຕອນ ແລະ ການຫັນເປັນອຸດສາຫະກຳທີ່ທັນສະໄໝ, ປະກອບສ່ວນເຂົ້າໃນການປະຕິບັດໜ້າທີ່ວຽກງານຕ່າງປະເທດຂອງພັກ ໃນໄລຍະໃໝ່ໃຫ້ໜັກແໜ້ນຍິ່ງຂຶ້ນ.

**2. ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ສູນກາງສະຫະພັນກຳມະບານລາວ ຈັດກິດຈະກຳ ກິລາບານເຕະມິດຕະພາບ ເພື່ອຂ່ຳນັບຮັບຕ້ອນ ວັນກຳມະກອນສາກົນ ຄົບຮອບ 140 ປີ**




ໃນວັນທີ 27 ເມສາ 2026, ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ສູນກາງສະຫະພັນກຳມະບານລາວ ໄດ້ຮ່ວມກັນຈັດກິດຈະກຳ ກິລາບານເຕະມິດຕະພາບ ເພື່ອເປັນການຂ່ຳນັບຮັບຕ້ອນ ວັນກຳມະກອນສາກົນ ຄົບຮອບ 140 ປີ (01/05/1886- 01/05/2026), ໂດຍມີນັກກິລາ, ຄະນະພັກ, ຄະນະນຳ, ພະນັກງານ ແລະ ກອງເຊຍ ຈາກສອງອົງການເຂົ້າຮ່ວມ ຢ່າງພ້ອມພຽງ ແລະ ເຕັມໄປດ້ວຍບັນຍາກາດຟົດຟື້ນມ່ວນຊື່ນ.